IUCN CEESP SSC Species Survival Commission
SULi Sustainable Use and Livelihoods Specialist Group
iied International Institute for Environment and Development
TRAFFIC the wildlife trade monitoring network
The ICCA Consortium

ການເຂົ້າຮ່ວມຂອງຊຸມຊົນໃນການຕ້ານການຄ້າສັດປ່າທີ່ຜິດກົດໝາຍ:

# ບົດຮຽນຈາກ ອາຊີຕາເວັນອອກສ່ຽງໃຕ້



ທັດສະນະທີ່ສະແດງອອກໃນສິ່ງພິມນີ້ບໍ່ຈຳເປັນຕ້ອງສະທ້ອນໃຫ້ເຫັນທັດສະນະຂອງຜູ້ຈັດກອງປະຊຸມ, ຜູ້ໃຫ້ທຶນ, ຫຼື ອົງກອນຂອງຜູ້ນຳສະເໜີໃນກອງປະຊຸມດັ່ງກ່າວ. 2017.

USAID FROM THE AMERICAN PEOPLE
german cooperation DEUTSCHE ZUSAMMENARBEIT
giz
MINISTERIUM FÜR EIN LEBENSWERTES ÖSTERREICH

# ຄວາມເປັນມາ

ການລັກລອບລ່າສັດປ່າ ແລະ ກິດຈະກໍາຕ່າງໆ ທີ່ພົວພັນເຖິງການຄ້າສັດປ່າທີ່ຜິດກົດໝາຍ ຢູ່ອາຊີຕາເວັນອອກສ່ຽງໃຕ້ ແລະ ພາກພື້ນແມ່ນໍ້າຂອງຕອນລຸ່ມ ໂດຍສະເພາະ ເປັນການສ້າງຄວາມເສຍຫາຍໃຫຍ່ຫຼວງໃຫ້ແກ່ປະຊາກອນຂອງສາຍພັນສັດປ່າສະເພາະ ເຊັ່ນ: ເສືອ ແລະ ຫຼິ່ນ, ແລະ ເປັນສາຍເຫດຫຼັກຂອງການຫຼຸດລົງຢ່າງໜ້າຕົກໃຈຂອງແມວປ່າ ແລະ ສັດລ້ຽງລູກດ້ວຍນົມຊະນິດຕ່າງໆ, ໝີ, ສັດເລືອຄານ, ປາສະຫຼາມ ແລະ ປາກະເບນ, ລວມທັງແຫຼ່ງພັນພືດ ແລະ ພັນໄມ້ຊະນິດຕ່າງໆ ທີ່ມີຄຸນຄ່າທາງການຄ້າ.

ຈຸດເນັ້ນໜັກ ອັນສໍາຄັນໃນການສົນທະນາດ້ານນະໂຍບາຍ ແລະ ການໃຊ້ຈ່າຍ ໃນດ້ານການອະນຸລັກ, ທັງລະດັບໂລກ ແລະ ຢູ່ໃນພາກພື້ນນີ້, ແມ່ນການສ້າງຄວາມເຂັ້ມແຂງດ້ານການບັງຄັບໃຊ້ກົດໝາຍ "ແຕ່ເທິງລົງລຸ່ມ", ແລະ ກ່ຽວກັບ ການປ່ຽນແປງພຶດຕິກໍາ ຂອງຜູ້ບໍລິໂພກເພື່ອຫຼຸດຜ່ອນຄວາມຕ້ອງການສາຍພັນສັດປ່າທີ່ຜິດກົດໝາຍ. ການຕອບສະໜອງເຫຼົ່ານີ້ ບໍ່ຄ່ອຍຈະພິຈາລະນາເຖິງຜົນກະທົບອັນສໍາຄັນຂອງການຄ້າສັດປ່າທີ່ຜິດກົດໝາຍ ທີ່ມີຕໍ່ຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ທີ່ດໍາລົງຊີວິດໃກ້ກັບສັດປ່າທີ່ຖືກຄຸກຄາມ, ແລະ ການຕໍ່ຕ້ານການຄຸກຄາມສັດປ່າຂອງເຂົາເຈົ້າ.

ການສ້າງປະສົບການທີ່ຜ່ານມາຢູ່ ອາຟຣິກາ, ອົງການສາກົນ ເພື່ອອະນຸລັກສັດປ່າ (IUCN CEESP/SSC) ການນໍາໃຊ້ ແລະ ການດໍາລົງຊີວິດແບບຍືນຍົງຂອງກຸ່ມຄົນສະເພາະ (IUCN SULi), ອົງການສາກົນເພື່ອອະນຸລັກສັດປ່າ ປະຈໍາປະເທດ ຫວຽດນາມ, ສະຖາບັນສາກົນດ້ານສິ່ງແວດລ້ອມ ແລະ ການພັດທະນາ (IIED), ການຄ້າ - ເຄືອຄ່າຍຕິດຕາມການຄ້າສັດປ່າ, ແລະ ການເຊື່ອມສານຂອບເຂດ ແລະ ພື້ນທີ່ການອະນຸລັກຂອງຊຸມຊົນ ແລະ ຄົນພື້ນເມືອງ ໄດ້ຈັດກອງປະຊຸມ ສໍາລັບ ພາກພື້ນອາຊີຕາເວັນອອກສ່ຽງໃຕ້ຂຶ້ນ ໂດຍເນັ້ນໃສ່ພາກພື້ນແມ່ນໍ້າຂອງຕອນລຸ່ມ ທີ່ມີຊື່ວ່າ *ນອກເໜືອການບັງຄັບໃຊ້: ເປັນການລວມເອົາຄົນພື້ນເມືອງ ແລະ ຊຸມຊົນຕ່າງໆ ເຂົ້າໃນການຕ້ານການຄ້າສັດປ່າທີ່ຜິດກົດໝາຍ* ຢູ່ນະຄອນຮ່າໂນຍ, ປະເທດຫວຽດນາມ,ໃນວັນທີ 15-16 ພະຈິກ 2016. ກອງປະຊຸມ ດັ່ງກ່າວໄດ້ຮັບການສະໜັບສະໜູນ ຈາກແຜນງານ "ໂພລີຟັນ (Polifund)" ຂອງເຢຍລະມັນ, ທີ່ໄດ້ຮັບການຈັດຕັ້ງປະຕິບັດ ໂດຍອົງການຮ່ວມມືດ້ານວິຊາການແຫ່ງ ປະເທດເຢຍລະມັນ (GIZ) ໃນນາມຂອງ ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ (BMZ) ແລະ ກະຊວງອະນຸລັກທໍາມະຊາດ ແລະ ສິ່ງແວດລ້ອມ; ສະໜັບສະໜູນຈາກອົງການຊ່ວຍເຫຼືອແຫ່ງປະເທດອາເມລິກາ ຜ່ານໂຄງການຄ້າສັດປ່າ, ການຕອບໂຕ້, ການປະເມີນ, ແລະ ການກໍານົດບູລິມະສິດ (Wildlife TRAPS); ແລະ ສະໜັບສະໜູນຈາກ ກະຊວງສິ່ງແວດລ້ອມ ແຫ່ງ ປະເທດອົດສຕຣາລີ ຜ່ານການສະໜັບສະໜູນໃນວົງກວ້າງຂອງຕົນເຂົ້າໃນແຜນງານນອກເໜືອການບັງຄັບໃຊ້.



© IUCN VN 2016

ການຕອບໂຕ້ຂອງບັນດາ ອົງການຈັດຕັ້ງບໍ່ສັງກັດລັດຖະບານ, ອົງການຈັດຕັ້ງຂອງລັດ ແລະ ຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ໄດ້ນໍາສະເໜີປະສົບການຂອງຕົນ ແລະ ບົດຮຽນທີ່ເຂົາເຈົ້າໄດ້ຮຽນຮູ້ ກ່ຽວກັບ ວິທີການທີ່ມີປະສິດທິພາບໃນການຕ້ານການຄ້າສັດປ່າທີ່ຜິດກົດໝາຍຜ່ານການເຂົ້າຮ່ວມຂອງຊຸມຊົນ. ກອງປະຊຸມດັ່ງກ່າວໄດ້ສັງລວມຄືນຂໍ້ມູນຫຼັກ, ຄວາມເຂົ້າໃຈ ແລະ ທັດສະນະຄະຕິຕ່າງໆ ທີ່ໄດ້ຈາກການນໍາສະເໜີ ແລະ ການສົນທະນາໃນກອງປະຊຸມຄັ້ງນີ້. ກອງປະຊຸມດັ່ງກ່າວນີ້ ເນັ້ນໃສ່ພາກພື້ນແມ່ນໍ້າຂອງຕອນລຸ່ມ ແຕ່ໄດ້ສ້າງກໍລະນີສຶກສາທີ່ມາຈາກທົ່ວພາກພື້ນອາຊີຕາເວັນ ອອກສ່ຽງໃຕ້ ແລະ ອາຊີໃຕ້.

## 1. ການຄ້າສັດປ່າທີ່ຜິດກົດໝາຍຢູ່ ອາຊີຕາເວັນອອກສ່ຽງໃຕ້ ຕ້ອງໄດ້ຮັບການແກ້ໄຂຢ່າງຮີບດ່ວນ, ແຕ່ມັນເປັນໄປໄດ້ຍາກ

a. ອາຊີຕາເວັນອອກສ່ຽງໃຕ້ ມັກຈະຖືກເບິ່ງເປັນເຂດທີ່ມີຄວາມຕ້ອງການ ສໍາລັບ ການຄ້າສັດປ່າທີ່ຜິດກົດໝາຍ, ແຕ່ຄວາມເປັນຈິງແລ້ວ ມັນແມ່ນເຂດສະໜອງຂະໜາດໃຫຍ່, ທີ່ມີການລ່າສັດປ່າ ສໍາລັບ ການຄ້າສັດປ່າທີ່ຜິດກົດໝາຍ ໃນລະດັບສູງ (ໂດຍສະເພາະໄມ້ທ່ອນ; ຊ້າງ; ແຮດ; ສັດລ້ຽງລູກດ້ວຍນົມຊະນິດຕ່າງໆ; ໝີ, ແມວປ່າ; ເຕົ່ານໍ້າຈືດ ແລະ ເຕົ່າທະເລ; ແລະ ສັດເລືອຄານຊະນິດຕ່າງໆ; ຫຼິ່ນ; ນົກ ແລະ ປາສະຫຼາມ, ປາກະເບນ ແລະ ປາຊະນິດຕ່າງໆ) ການອະນຸລັກອັນຮີບດ່ວນ ໃນວົງກວ້າງ ແລະ ສິ່ງຜົນກະທົບຕໍ່ຊຸມຊົນ. ກັບດັກສັດຊະນິດຕ່າງໆ, ການລ່າສັດແບບບໍ່ເລືອກ, ແລະ ການລ່າສັດຢ່າງກວ້າງຂວາງ ຢູ່ພາກພື້ນດັ່ງກ່າວ ເປັນການທໍາລາຍສັດປ່າຢ່າງຫຼວງຫຼາຍ.

b. ພາກພື້ນນີ້ມີຊຸມຊົນທຸກຍາກ ແລະ ຄວາມບໍ່ເທົ່າທຽມກັນໃນລະດັບສູງ ແລະ ໄດ້ມີການຂະຫຍາຍການພັດທະນາດ້ານເສດຖະກິດຢ່າງວ່ອງໄວ ແລະ ມີການເຄື່ອນຍ້າຍຂອງຜູ້ຄົນ ແລະ ສິນຄ້າທີ່ເພີ່ມຂຶ້ນຫຼາຍ. ໄດ້ມີປັດໃຈສ່ຽງຫຼັກຫຼາຍຢ່າງ ໃຫ້ແກ່ການຄ້າສັດປ່າທີ່ຜິດກົດໝາຍ.

c. ການພັດທະນາດ້ານເສດຖະກິດຢູ່ພາກພື້ນນີ້ ໄດ້ຖືກກໍານົດຈາກການສ້າງເສດຖະກິດທ້ອງຖິ່ນ ຫຼື ການສ້າງເຂດເສດຖະກິດພິເສດ. ໃນຂະນະທີ່ເສດຖະກິດເຫຼົ່ານີ້ ສາມາດສ້າງອາຊີບໃຫ້ແກ່ຊຸມຊົນນັ້ນ, ພວກມັນຍັງໄດ້ນໍາໄປສູ່ການອໍານວຍຄວາມສະດວກ ໃຫ້ແກ່ການຄ້າສັດປ່າທີ່ຜິດກົດໝາຍແບບບໍ່ໄດ້ຕັ້ງໃຈອີກດ້ວຍ.

d. ໄດ້ມີການເພີ່ມການຄ້າແບບປິດລັບ, ຜ່ານລະບົບອິນເຕີເນັດ ແລະ ໂທລະສັບ ທີ່ນັບມື້ເພີ່ມຂຶ້ນເລື້ອຍໆ, ບາງຄັ້ງໄດ້ມີການບັງຄັບໃຊ້ເພື່ອພະຍາຍາມຕອບໂຕ້ການເພີ່ມຂຶ້ນ ແລະ/ຫຼື ການຜັນແປຂອງຕະຫຼາດ. ສິ່ງນີ້ ໄດ້ນໍາເອົາກຸ່ມຜູ້ບໍລິໂພກກຸ່ມໃໝ່ເຂົ້າໃນການຄ້າສັດປ່າທີ່ຜິດກົດໝາຍ.

e. ການບັງຄັບໃຊ້ກົດໝາຍວ່າດ້ວຍ ການຄຸ້ມຄອງສັດປ່າ ໂດຍທົ່ວໄປແລ້ວແມ່ນຍັງອ່ອນຫຼາຍ, ແລະ ບາງຄັ້ງກໍ່ບໍ່ມີເລີຍ. ໃນຂະນະທີ່ຄວາມພະຍາຍາມບາງດ້ານໃນການແກ້ໄຂບັນຫາການຄ້າສັດປ່າທີ່ຜິດກົດໝາຍໄດ້ຮັບການປະຕິບັດຢູ່ບາງປະເທດ ໃນຊຸມປີທີ່ຜ່ານມາກໍ່ຕາມ, ແຕ່ກໍ່ຍັງມີຕະຫຼາດເປີດກ້ວາງ, ຂະໜາດໃຫຍ່, ຕະຫຼາດທີ່ບໍ່ມີລະບຽບຄຸ້ມຄອງທີ່ມີປະສິດທິພາບ ສໍາລັບ ແຫຼ່ງສັດປ່າທີ່ຜິດກົດໝາຍ (ໂດຍສະເພາະເຂດຊາຍແດນ) ແລະ ມີຄວາມສາມາດໃນການບັງຄັບໃຊ້ ແລະ ການປູກຈິດສໍານຶກດ້ານການອະນຸລັກທີ່ຍັງຕໍ່າ. ຢູ່ບາງປະເທດ, ໜ້າວຽກຫຼັກທີ່ຈໍາເປັນຂອງການອະນຸລັກໄດ້ຮັບການປະຕິບັດ ໂດຍ ອົງການສາກົນບໍ່ສັງກັດລັດຖະບານ, ໃນຂະນະທີ່ລັດຖະບານ ໄດ້ເຂົ້າຮ່ວມ ແລະ/ຫຼື ຄວາມສາມາດຂອງລັດ ໃນຂົງເຂດສັດປ່າແມ່ນຍັງຂາດເຂີນຢ່າງຊຶ້ນເຊີງ.

f. ໂດຍລວມແລ້ວ, ການຄອບຄອງທີ່ດິນ/ຊັບພະຍາກອນ ແລະ ສິດໃນການຄອບຄອງຕາມປະເພນີຂອງຊຸມຊົນ, ກົດໝາຍ ແລະ ການປະຕິບັດຂອງຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ສ່ວນໃຫຍ່ແມ່ນຈະບໍ່ຖືກຮັບຮູ້ຕາມກົດໝາຍ ແລະ ອາດຈະຖືກບັ່ນທອນຈາກການແຊກແຊງຂອງລັດ, ລວມທັງ ການອອກສໍາປະທານຂອງລັດ, ກົດໝາຍວ່າດ້ວຍ ການອະນຸລັກ, ແລະ ເຂດສະຫງວນ.

g. ຢູ່ພາກພື້ນອາຊີຕາເວັນອອກສ່ຽງໃຕ້ ສ່ວນໃຫຍ່ ມັກມີຄວາມທັບຊ້ອນກັນ ລະຫວ່າງ ການລ່າສາຍພັນຕ່າງໆ ສໍາລັບ ນໍາໃຊ້ພາຍໃນທ້ອງຖິ່ນກັບການຄ້າສັດປ່າຢູ່ຕະຫຼາດພາຍໃນປະເທດ ແລະ ຕະຫຼາດສາກົນ, ສ່ວນໜຶ່ງ ແມ່ນຍ້ອນມີການນໍາໃຊ້ກັບດັກຈັບສັດຢ່າງແຜ່ຫຼາຍ. ສະມາຊິກຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ອາດຈະເຂົ້າຮ່ວມໃນຮູບແບບຕ່າງໆເຫຼົ່ານີ້. ຍົກຕົວຢ່າງ, ນັກລ່າສັດຢູ່ໃນໝູ່ບ້ານອາດໄປລ່າສັດ ໂດຍທົ່ວໄປແລ້ວແມ່ນ ເພື່ອຕອບສະໜອງຄວາມຕ້ອງການຂອງຄອບຄົວ, ແຕ່ຍັງອາດຈະລ່າສາຍພັນອື່ນໆເພີ່ມເຕີມ ແລະ/ຫຼື ຂາຍສັດທີ່ເຂົາເຈົ້າຫາມາໄດ້ໃຫ້ແກ່ພໍ່ຄ້າທີ່ມາຈາກພາຍນອກໃນເວລາທີ່ມີຄວາມຕ້ອງການອີກດ້ວຍ.

h. ໃນຊຸມປີທີ່ຜ່ານມາ ການລ່າສັດ ເພື່ອການຄ້າສັດປ່າທີ່ຜິດກົດໝາຍໂດຍ "ພໍ່ຄ້າພາຍນອກ" ໄດ້ມີຈໍານວນເພີ່ມຂຶ້ນ (ເຊັ່ນ: ຜູ້ທີ່ບໍ່ແມ່ນສະມາຊິກຊຸມຊົນ), ລວມທັງທະຫານ.

i. ໄດ້ມີ ກົດລະບຽບ ຫ້າມລ່າສັດຢູ່ ພາກພື້ນອາຊີຕາເວັນອອກສ່ຽງໃຕ້ ຢ່າງກວ້າງຂວາງ, ແຕ່ລະບຽບເຫຼົ່ານັ້ນ ບໍ່ໄດ້ຮັບການປະຕິບັດ (ທັງໂດຍຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ແລະ ອົງການບັງຄັບໃຊ້ກົດລະບຽບ). ຢູ່ບ່ອນທີ່ລະບຽບເຫຼົ່ານັ້ນມີການບັງຄັບໃຊ້, ພວກມັນອາດຈະມີຜົນກະທົບດ້ານລົບຕໍ່ການດໍາລົງຊີວິດ



© Caesar Rahman

ຂອງຊຸມຊົນ ແລະ ການຈູງໃຈຂອງເຂົາເຈົ້າ ໃນການປະກອບສ່ວນເຂົ້າໃນການອະນຸລັກ.

j. ການຜັກດັນແບບປິດລັບຂອງຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ໃນການຄ້າສັດປ່າທີ່ຜິດກົດໝາຍສາມາດ ລວມມີ ການບໍລິການໃຫ້ເງິນກູ້ລ່ວງໜ້າ (ການຕົກເປັນໜີ້) ແລະ ຊອກເງິນມາໃຊ້ຈ່າຍໃນເວລາມີຄວາມຈຳເປັນເຊັ່ນ: ຄ່າຢາປິ່ນປົວພະຍາດ.

k. ພື້ນທີ່ປ່າໄມ້ປົກຄຸມຢ່າງຫຼວງຫຼາຍຢູ່ພາກພື້ນດັ່ງກ່າວ, ຄວບຄູ່ ກັບການເຊື່ອມໂຊມຂອງສາຍພັນສຳຄັນຕ່າງໆ, ໝາຍເຖິງທາງເລືອກໃນການສ້າງສິ່ງຈູງໃຈໃຫ້ແກ່ການອະນຸລັກສາຍພັນຕ່າງໆ ທີ່ມາຈາກການທ່ອງທ່ຽວ ທີ່ອີງໃສ່ທັດສະນະທີ່ວ່າ ສັດປ່າ ເປັນສິ່ງຕ້ອງຫ້າມທີ່ເຄັ່ງຄັດ.



## ກໍລະນີສຶກສາທີ 1

### ການບັງຄັບໃຊ້ທີ່ເຄັ່ງຄັດຕໍ່ການລັກລອບລ່າສັດປ່າ ແລະ ການຄ້າສັດປ່າແບບຜິດກົດໝາຍ ທີ່ນັບມື້ເພີ່ມຂຶ້ນ, ໃນຂະນະທີ່ເປັນການສ້າງຄວາມເສຍຫາຍຕໍ່ຜູ້ທຸກຍາກ ຫຼື ບໍ່?

ຊາຣອນ ໂກ ປີ ຮີ (ກອງທຶນສາກົນເພື່ອອະນຸລັກສັດປ່າປະຈຳ ປະເທດມາເລເຊຍ) ໄດ້ເນັ້ນໃຫ້ເຫັນຜົນກະທົບຕ່າງໆ ຂອງການບັງຄັບໃຊ້ກົດລະບຽບການຄ້າສັດປ່າທີ່ຜິດກົດໝາຍ ຕໍ່ ຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຢູ່ ຊາບານ, ປະເທດມາເລເຊຍ ແລະ ການບໍ່ຮັບຮູ້ຜົນກະທົບທີ່ມີຕໍ່ຄວາມພ້ອມຂອງເຂົາເຈົ້າ ໃນການສະໜັບສະໜູນໃຫ້ແກ່ການອະນຸລັກ. ອີກດ້ານໜຶ່ງ, ແມ່ນ ການລັກລອບລ່າສັດປ່າ, ກອງທຶນສາກົນເພື່ອອະນຸລັກສັດປ່າປະຈຳປະເທດມາເລເຊຍໄດ້ພົບວ່າປະມານ 85% ຂອງການລ່າສັດແມ່ນເພື່ອການດຳລົງຊີວິດພໍກຸ້ມກິນ, ເຊິ່ງໃນນັ້ນມີປະມານ 15% ແມ່ນເພື່ອການຄ້າ. ການລ່າສັດ ເພື່ອການດຳລົງຊີວິດທັງໝົດແມ່ນມາຈາກເຂດຫວງຫ້າມ ແລະ ຕາມຫຼັກວິຊາການແລ້ວແມ່ນຜິດກົດໝາຍ. ເຖິງຢ່າງໃດກໍ່ຕາມ, ການເອື່ອຍອີງໃສ່ສັດປ່າຂອງຜູ້ຄົນແມ່ນເບິ່ງຄືວ່າຈະເພີ່ມຂຶ້ນ, ເຊິ່ງອາດຈະຍ້ອນວ່າ ຊຸມຊົນເຫຼົ່ານີ້ ມີຄວາມທຸກຈົນຫຼາຍກວ່າເກົ່າ, ເນື່ອງມາຈາກການສູນເສຍທີ່ດິນ ແລະ ສູນເສຍທາງເລືອກໃນການດຳລົງຊີວິດ. ການບັງຄັບໃຊ້ຕ້ານການລ່າສັດໄດ້ມີບາດກ້າວເພີ່ມຂຶ້ນໃນຊຸມປີທີ່ຜ່ານມາ ແຕ່ໄດ້ມີການປະຕິບັດແບບບໍ່ມີການຈຳແນກ: ໄດ້ມີຄວາມພະຍາຍາມພຽງເລັກໜ້ອຍໃນການຈຳແນກຄວາມແຕກຕ່າງ ລະຫວ່າງ ການລ່າສັດເພື່ອການດຳລົງຊີວິດພໍກຸ້ມກິນ ກັບການລ່າສັດເພື່ອເປັນສິນຄ້າ.

ຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນແມ່ນເປົ້າໝາຍທີ່ອ່ອນໄຫວ: ຄົນສ່ວນໃຫຍ່ທີ່ຖືກຈັບກຸມແມ່ນຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຫຼາຍກວ່າພໍ່ຄ້າທີ່ມີອຳນາດທີ່ເຂົ້າມາຫາຜົນປະໂຫຍດທັງໝົດ. ການໃສ່ໂທດ ທາງການເງິນໝາຍຄວາມວ່າຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຕ້ອງໄດ້ຊອກຫາເງິນທຶນມາຈ່າຍຄ່າຖືກລົງໂທດດັ່ງກ່າວ, ເຊິ່ງ ອາດເຮັດໃຫ້ພວກເຂົາເຈົ້າຕ້ອງໄດ້ຂາຍທີ່ດິນ. ການຈຳຄຸກ ອາດ ໝາຍເຖິງ ຄວາມເສຍຫາຍອັນໃຫຍ່ຫຼວງດ້ານລາຍຮັບຂອງຄອບຄົວ. ຄວາມກົດດັນ ແລະ ຄວາມຄັບແຄ້ນໃຈໄດ້ນຳໄປສູ່ການເຮັດໃຫ້ຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ກາຍເປັນຜູ້ທີ່ມີຄວາມໂຫດຮ້າຍ, ແລະ ຖ້າເປັນດັ່ງນັ້ນຫຼາຍໆຄັ້ງ ຍິ່ງເຮັດໃຫ້ເຂົາເຈົ້າມີການລ່າສັດຫຼາຍຂຶ້ນ. ໃນເວລາດຽວກັນນັ້ນ, ເຈົ້າໜ້າທີ່ ປ່າສະຫງວນຈະບໍ່ມີຄວາມກະຕືລືລົ້ນໃນການເຮັດວຽກຍ້ອນວ່າ ຊຸມຊົນກຽດຊັງເຂົາເຈົ້າ. ວິທີການດັ່ງກ່າວນີ້ ໄດ້ສ້າງສິ່ງກີດຂວາງໃຫ້ແກ່ການສ້າງສາຍພົວພັນອັນດີກັບຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ແລະ ມັກເຮັດໃຫ້ຜົນສຳເລັດໃນໄລຍະຍາວເປັນໄປບໍ່ໄດ້. ຊາຣອນ ຮຽກຮ້ອງໃຫ້ມີວິທີການເຮັດວຽກ “ແຕ່ເທິງລົງລຸ່ມ” ທີ່ຈຳເປັນຕ້ອງໄດ້ມີການດຸ່ນດ່ຽງ ຈາກວິທີການເຮັດວຽກ “ແຕ່ລຸ່ມຂຶ້ນເທິງ”, ເຊິ່ງ ສາມາດລວມເອົາການສະໜັບສະໜູນສິດໃນການຄອບຄອງທີ່ດິນ ແລະ ສິດຕາມຮີດຄອງປະເພນີ ໃນການລ່າສັດຂະໜາດນ້ອຍ ໃຫ້ເປັນສ່ວນໜຶ່ງຂອງການແກ້ໄຂບັນຫາ.

l.

*ທັດສະນະຕ່າງໆ ທີ່ສະແດງອອກບໍ່ຈຳເປັນຕ້ອງເປັນຕົວແທນໃຫ້ແກ່ກອງທຶນສາກົນ ເພື່ອອະນຸລັກສັດປ່າປະຈຳ ປະເທດມາເລເຊຍ.*

i. ຜົນກະທົບ ຂອງການຄ້າສັດປ່າທີ່ຜິດກົດໝາຍ ທີ່ມີຕໍ່ຊຸມຊົນມີລະດັບແຕກຕ່າງກັນ ແລະ ມີຄວາມຮຸນແຮງທີ່ແຕກຕ່າງກັນ ແລະ ອາດຈະລວມມີ:

(i) ການຫຼຸດລົງຂອງການມີສາຍພັນຕ່າງໆ ສຳລັບ ການດຳລົງຊີວິດ ແລະ ວັດທະນະທຳ ການນຳໃຊ້ແບບພໍກຸ້ມກິນ, ການສູນເສຍຄວາມຮູ້ ແລະ ການປະຕິບັດການຄຸ້ມຄອງແບບດັ້ງເດີມ;

(ii) ການຫຼຸດລົງຂອງການມີສາຍພັນທີ່ສຳຄັນຕ່າງໆ ສຳລັບ ການສ້າງລາຍຮັບຂອງທ້ອງຖິ່ນ;

(iii) ການເພີ່ມຂຶ້ນຂອງ ລະດັບຄວາມຂັດແຍ່ງ ຂອງມະນຸດກັບສັດປ່າ, ທີ່ເປັນຜົນເນື່ອງມາຈາກ ລະດັບການລ່າອາຫານທີ່ຫຼຸດລົງ, ໄດ້ຕອບສະໜອງໃຫ້ແກ່ການເພີ່ມຂຶ້ນຂອງສາຍພັນຕ່າງໆ ທີ່ທຳລາຍພືນລະປູກ (ເຊັ່ນ: ໝູປ່າ);

(iv) ການເຊື່ອມໂຊມຂອງທີ່ຢູ່ອາໃສ ທີ່ນັບມື້ເພີ່ມຂຶ້ນ ຍ້ອນການຈູດເຜົາທີ່ພົວພັນເຖິງການຄ້າສັດປ່າທີ່ຜິດກົດໝາຍ, ເພື່ອຕອບສະໜອງຜົນໄດ້ຮັບເຊັ່ນ: ຄວາມອຸດົມສົມບູນຂອງດິນ

(v) ຄວາມແຕກແຍກຂອງສັງຄົມ, ຍ້ອນການປ່ຽນພຶດຕິກຳຈາກຄວາມຄິດແບບຊຸມຊົນ (ເຊິ່ງທຸກຢ່າງມີການແບ່ງປັນ) ມາເປັນຄວາມຄິດແບບບຸກຄົນ (ເຊິ່ງຜົນປະໂຫຍດສູງສຸດຂອງບຸກຄົນກາຍເປັນສິ່ງທີ່ມາກ່ອນ). ການປ່ຽນແປງດັ່ງກ່າວນີ້ອາດຈະມາປ່ຽນແທນຍ້ອນວ່າຊຸມຊົນມີຄວາມເຊື່ອມໂຍງເຂົ້າກັບ ເສດຖະກິດຕະຫຼາດ ຫຼາຍກວ່າເກົ່າ;

(vi) ຄວາມໝັ້ນຄົງຂອງຊຸມຊົນຫຼຸດລົງ ຍ້ອນຜົນຂອງການຫຼັ່ງໄຫຼເຂົ້າມາຂອງກຸ່ມຄົນຕ່າງໆ;

(vii) ບັນຫາສັງຄົມ ແລະ ສຸຂະພາບ ທີ່ເປັນຜົນເນື່ອງມາຈາກການພົວພັນທາງການຄ້າ ແລະ ການນຳໃຊ້ສິ່ງເສບຕິດ.

## 2. ປະສິດທິພາບຂອງການບັງຄັບໃຊ້ມີຄວາມສຳຄັນ - ແຕ່ມັກຈະຂາດ ຫຼື ມີເປົ້າໝາຍທີ່ບໍ່ຊັດເຈນ

a. ມີຫຼາຍປະເທດໃນພາກພື້ນນີ້ ທີ່ລະດັບຄວາມສາມາດຂອງເຈົ້າໜ້າທີ່ພາກສະໜາມ "ເຈົ້າໜ້າທີ່ປ່າສະຫງວນ" ຂອງລັດມີໜ້ອຍ, ຂາດການຝຶກອົບຮົມທີ່ພຽງພໍ ແລະ ບໍ່ມີການຈູງໃຈໃນການປະຕິບັດໜ້າທີ່. ປັດໃຈດ້ານວັດທະນະທຳ ແລະ ການເມືອງ ໝາຍຄວາມວ່າ ມັກຈະບໍ່ໄດ້ຮັບການສະໜັບສະໜູນຈາກລະດັບສູງ ໃຫ້ແກ່ເຈົ້າໜ້າທີ່ປ່າສະຫງວນ ໃນການຮ່ວມເຮັດວຽກກັບຄົນທ້ອງຖິ່ນ.




b. ແມ້ແຕ່ບ່ອນທີ່ມີການແຊກແຊງການຄ້າສັດປ່າທີ່ຜິດກົດໝາຍໂດຍອີງໃສ່ການເຂົ້າຮ່ວມທີ່ເຂັ້ມແຂງຂອງທ້ອງຖິ່ນກໍ່ຕາມ, ແຕ່ການແຊກແຊງນີ້ ຍັງອາດຈະຖືກບັ່ນທອນດ້ວຍປະສິດທິພາບ ຂອງການບັງຄັບໃຊ້ກົດໝາຍ ແລະ ການບັງຄັບໃຊ້ຢ່າງທັນການ ຂອງລັດ ເຂົ້າໃນໂຄງການສິດທິ/ການເປັນເຈົ້າຂອງ ຂອງຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ແລະ ຢຸດການລ່າສັດປ່າ, ໂດຍສະເພາະ ການລ່າສັດຂອງຜູ້ຄົນທີ່ມາຈາກພາຍນອກ.

c. ຢູ່ບັນດາປະເທດທີ່ມີ ແລະ ເຂດທີ່ການບັງຄັບໃຊ້ກົດໝາຍທີ່ມີຄວາມເຂັ້ມແຂງນັ້ນ, ຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນອາດຈະເປັນກຸ່ມ ທີ່ໄດ້ຮັບຄວາມລຳບາກຫຼາຍທີ່ສຸດ ເນື່ອງຈາກເປັນຜູ້ໄດ້ຮັບຜົນປະໂຫຍດ ໃນລະດັບຕ່ຳທີ່ສຸດ ຈາກການເຂົ້າຮ່ວມໃນການຄ້າຂອງຕົນ, ເຂົາເຈົ້າເປັນ "ເປົ້າໝາຍທີ່ອ່ອນໄຫວ" ສຳລັບ ການບັງຄັບໃຊ້ ກົດໝາຍຕ້ານການຄ້າສັດປ່າທີ່ຜິດກົດໝາຍ ແລະ ມັກຈະຕົກເປັນເປົ້າໝາຍ ໃນຂະນະທີ່ຜູ້ທີ່ມີອຳນາດແມ່ນບໍ່ສາມາດແຕະຕ້ອງໄດ້ ແລະ ສືບຕໍ່ເຄື່ອນຍ້າຍຜະລິດຕະພັນສັດປ່າ ທີ່ມີມູນຄ່າສູງ (ລວມທັງໄມ້ທ່ອນ) ໂດຍບໍ່ມີການດຳເນີນຄະດີ. ການປັບໄໝອາດສົ່ງຜົນໃຫ້ແກ່ທີ່ດິນ ຫຼື ຊັບສິນທີ່ນັບມື້ບົກແຫ້ງທີ່ກຳລັງຖືກຂາຍອອກ, ການກັກຂັງ ສາມາດຕັດຮອນການເຂົ້າຮ່ວມໃນການສ້າງລາຍຮັບພື້ນຖານຂອງຄອບຄົວ - ດັ່ງນັ້ນ ການລົງໂທດສາມາດທ່ວງດຶງເອົາຜູ້ທຸກຍາກລົງສູ່ຄວາມທຸກຍາກຫຼາຍກວ່າເກົ່າ ແລະ ດັ່ງນັ້ນ ການຟື້ນຟູກ່ຽວກັບຜົນຕອບແທນຈາກການຄ້າສັດປ່າທີ່ຜິດກົດໝາຍ.

d. ການປະຕິບັດໂທດຕໍ່ເຈົ້າໜ້າທີ່ ສໍ້ລາດບັງຫຼວງ ທີ່ເຂົ້າຮ່ວມໃນການຄ້າສັດປ່າ ແລະ ເອົາໃຈໃສ່ຈຸດສຳຄັນທີ່ຖືກເບິ່ງຂ້າມ ໃນຂະນະທີ່ສະມາຊິກຊຸມຊົນທ້ອງຖິ່ນ ເປັນເປົ້າໝາຍຂອງການບັງຄັບໃຊ້ກົດໝາຍ ສາມາດສ້າງຄວາມບໍ່ເພິ່ງພໍໃຈ ແລະ ຄວາມໂກດແຄ້ນ ແລະ

ບັ່ນທອນຄວາມເຊື່ອໝັ້ນໄດ້. ສິ່ງນີ້ ໄດ້ເຮັດໃຫ້ວິທີການອະນຸລັກຮ່ວມກັນເປັນໄປບໍ່ໄດ້ ແລະ ເປັນການເພີ່ມການຄ້າສັດປ່າທີ່ຜິດກົດໝາຍ ແລະ ສາຍພັນທີ່ມີຄຸນຄ່າຫຼາຍຂຶ້ນກວ່າເກົ່າ.

e. ສ້າງຄວາມເຂັ້ມແຂງດ້ານຄວາມສາມາດ ໃຫ້ແກ່ ອົງການບັງຄັບໃຊ້ກົດໝາຍຂອງລັດ ແລະ ສ້າງສິ່ງຈູງໃຈ ໃນການແກ້ໄຂບັນຫາການຄ້າສັດປ່າທີ່ຜິດກົດໝາຍ, ໃນຮູບການແກ້ໄຂບັນຫາທີ່ມີປະສິດທິພາບຮ່ວມກັນ, ບັນຫາຫຼັກ ແລະ ການສໍ້ລາດບັງຫຼວງ ຂອງເຈົ້າໜ້າທີ່, ໄດ້ກາຍເປັນບູລິມະສິດອັນສຳຄັນໃນພາກພື້ນດັ່ງກ່າວ ໃນການສະໜັບສະໜູນຄວາມພະຍາຍາມຂອງຊຸມຊົນເຂົ້າໃນການຕ້ານການຄ້າສັດປ່າ.

## 3. ການບັງຄັບໃຊ້ກົດໝາຍຈະມີປະສິດທິຜົນຫຼາຍກວ່າເກົ່າ ຖ້າຫາກວ່າຊຸມຊົນໄດ້ຮັບການຈູງໃຈ ແລະ ເປັນຜູ້ຮ່ວມມືທີ່ຫ້າວຫັນກວ່າເກົ່າ

a. ການບັງຄັບໃຊ້ໃນຂັ້ນລັດ ສຳລັບ ການຕ້ານການລ່າສັດເພື່ອການຄ້າສັດປ່າທີ່ຜິດກົດໝາຍ ຈະໄດ້ຮັບການຊຸກຍູ້ຜ່ານສາຍພົວພັນການຮ່ວມມືກັບຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ທີ່ໄດ້ຮັບການຈູງໃຈ. ສິ່ງເຫຼົ່ານີ້ ອາດລວມມີ, ຍົກຕົວຢ່າງ, ຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ເປັນຜູ້ອະນຸລັກສັດປ່າ ຫຼື ເຈົ້າໜ້າທີ່ປ່າສະຫງວນ, ທີ່ມີສ່ວນຮ່ວມເຂົ້າໃນການຮ່ວມບັງຄັບໃຊ້ກົດໝາຍກັບອົງການຈັດຕັ້ງຂອງລັດ, ເປັນຜູ້ສະໜອງແຫຼ່ງຂໍ້ມູນ ແລະ ຂໍ້ມູນຂ່າວສານ ໃຫ້ແກ່ ອົງການຈັດຕັ້ງຕ່າງໆ, ດຳເນີນການຕິດຕາມກິດຈະກຳທີ່ຜິດກົດໝາຍ ຫຼື ຕິດຕາມຊັບພະຍາກອນຕ່າງໆຢູ່ພາກສະໜາມ.

b. ສິ່ງນີ້ ໄດ້ເກີດມີຄຳຖາມວ່າ ການແຊກແຊງ ແລະ ວິທີການອັນໃດ ທີ່ມີຄວາມເປັນໄປໄດ້ໃນການສະໜັບສະໜູນ ແລະ ຈູງໃຈການເຂົ້າຮ່ວມຂອງຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ເຂົ້າໃນການຕ້ານການລ່າສັດ. ໃນຫຼາຍກໍລະນີ ທີ່ຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນບໍ່ເຊື່ອໝັ້ນ ແລະ ບໍ່ພໍໃຈອົງການອະນຸລັກ (ຍ້ອນການສູນເສຍການຄອບຄອງທີ່ດິນ ທີ່ເປັນມໍລະດົກຕົກທອດ ຂອງບັນພະບູລຸດມາເປັນເຂດປ່າສະຫງວນ ຫຼື ການສູນເສຍສິດໃນສັດປ່າ) ແລະ ໄດ້ຮັບການຈູງໃຈພຽງເລັກໜ້ອຍໃນການປົກປ້ອງສັດປ່າ.

c. ການແຊກແຊງການຄ້າສັດປ່າທີ່ຜິດກົດໝາຍ ມັກຈະໄດ້ຮັບການຜັກດັນຈາກແນວຄວາມຄິດທີ່ວ່າ "ວິກິດການ", ແຕ່ມັນມີຄວາມສຳຄັນໃນການພິຈາລະນາ ແລະ ສ້າງຄວາມຄິດເຂົ້າໃນການອອກແບບໂຄງສ້າງໃຫ້ເປັນວິທີຮັກສາຄວາມຍືນຍົງຂອງຜົນໄດ້ຮັບໄລຍະຍາວ ແລະ ພາຍຫຼັງສິ້ນສຸດການແຊກແຊງຈາກໂຄງການ.

d. ແຜນງານ ເຈົ້າໜ້າທີ່ປ່າສະຫງວນ/ເຈົ້າໜ້າທີ່ອະນຸລັກສັດປ່າ/ເຝົ້າລະວັງສັດປ່າ ໂດຍອີງໃສ່ການຈ່າຍເງິນ ໃຫ້ແກ່ຄົນທ້ອງຖິ່ນ ໃຫ້ເຮັດໜ້າວຽກນີ້ ແມ່ນວິທີການທີ່ນຳໃຊ້ທົ່ວໄປໃນການສົ່ງເສີມການເຂົ້າຮ່ວມຂອງຊຸມຊົນເຂົ້າໃນການຕ້ານການລ່າສັດ. ເຖິງຢ່າງໃດກໍ່ຕາມ, ການແຊກແຊງປະເພດນີ້ອາດຈະບໍ່ມີຄວາມຍືນຍົງໃນໄລຍະຍາວ, ຍ້ອນວ່າ ເຂົາເຈົ້າອີງໃສ່ປັດໃຈທາງການເງິນຈາກພາຍນອກ ແລະ ອາດຈະບໍ່ແມ່ນການປູກຝັງດ້ານວັດທະນະທຳ ແລະ ສັງຄົມ.

e. ການແຊກແຊງຄວນຮັບຮູ້ ແລະ ສ້າງຂຶ້ນຈາກຄວາມຮູ້ດັ້ງເດີມ, ລະບົບການຄຸ້ມຄອງແບບດັ້ງເດີມ ແລະ ການຄຸ້ມຄອງຊັບພະຍາກອນແບບດັ້ງເດີມທີ່ຊຸມຊົນປະຕິບັດ, ໃນຂະນະທີ່ການຮັບຮູ້ວ່າຊຸມຊົນຕ່າງໆ ກຳລັງປະເຊີນກັບການປ່ຽນແປງດ້ານວັດທະນະທຳ ແລະ ສັງຄົມທີ່ກິດຈະກຳດັ່ງເດີມບາງອັນອາດຈະບໍ່ມີຄວາມຍືນຍົງ.

f. ການລ່າສັດປ່າ (ລວມທັງການຫາປາ ແລະ ນຳໃຊ້ພືດຊະນິດຕ່າງໆ) ສ່ວນໃຫຍ່ເປັນຮີດຄອງດັ້ງເດີມ ແລະ ຝັງເລິກຢູ່ໃນວັດທະນະທຳ ແລະ ສັງຄົມ, ແລະ ມັກຈະມີການຂັດແຍ່ງ ລະຫວ່າງ ການປະຕິບັດທີ່ສືບທອດຕາມຮີດຄອງປະເພນີກັບກົດໝາຍວ່າດ້ວຍ ການອະນຸລັກ. ຄວາມເຄັ່ງຄັດ ກ່ຽວກັບ ການນຳໃຊ້ສັດປ່າ ແລະ ພືດຕາມຮີດຄອງປະເພນີ, ຖ້າຫາກວ່າ ມີການບັງຄັບໃຊ້, ອາດຈະເບິ່ງເປັນການລະເມີດກົດໝາຍ, ແລະ ອາດເຮັດໃຫ້ເກີດຄວາມໂກດແຄ້ນ ແລະ ຄວາມບໍ່ພໍໃຈ ແລະ ສາມາດຜັກດັນໃຫ້ບາງຄົນສະໜັບສະໜູນການຄ້າສັດປ່າທີ່ຜິດກົດໝາຍໄດ້.

g. ມັນມີຄວາມສຳຄັນ ສຳລັບ ການແຊກແຊງ ທີ່ຕ້ອງກຳນົດວ່າແມ່ນໃຜເປັນຜູ້ຢູ່ລະດັບທ້ອງຖິ່ນທີ່ເຂົ້າຮ່ວມ ໃນການຄ້າສັດປ່າທີ່ຜິດກົດໝາຍທີ່ແທ້ຈິງ, ແລະ ຕ້ອງປ່ຽນແປງພຶດຕິກຳຂອງເຂົາເຈົ້າຢ່າງມີປະສິດທິຜົນ.



## ກໍລະນີສຶກສາທີ 2

### ການເພີ່ມຜົນປະໂຫຍດ, ການຈູງໃຈ ແລະ ການເປັນເຈົ້າຂອງ ຂອງຊຸມຊົນໃນການຢຸດຕິການລ່າສັດປ່າ ເພື່ອການຄ້າສັດປ່າທີ່ຜິດກົດໝາຍໄດ້ແນວໃດ?

ອິມ ໂສພານາ (ມລຸບ ໄບຕ່ອງ, ປະເທດກຳປູເຈຍ) ໄດ້ນຳສະເໜີ ຜົນໄດ້ຮັບຂອງ ໂຄງການທ່ອງທ່ຽວເຊີງອະນຸລັກທຳມະຊາດ ໂດຍອີງໃສ່ຊຸມຊົນເປັນເຈົ້າການ. ພື້ນທີ່ໂຄງການດັ່ງກ່າວ ຕັ້ງຢູ່ພາຍໃນປ່າສະຫງວນແຫ່ງຊາດ ກີຣີໂຣມ, ເຊິ່ງ ເປັນສ່ວນໜຶ່ງຂອງເຂດເຊື່ອມຕໍ່ທາງເດີນຂອງຊ້າງທີ່ເຊື່ອມຕໍ່ເຂດພິທັກສັດປ່າ ໂອຣອນ ກັບ ພູຄາດາມອມ.

ກ່ອນເລີ່ມຕົ້ນໂຄງການ, ຊາວບ້ານ ໄດ້ເອື່ອຍອີງໃສ່ການເກັບຊັບພະຍາກອນປ່າໄມ້ຢ່າງຫຼວງຫຼາຍ, ລວມທັງ ການລ່າສັດປ່າ, ການຕັດໄມ້ ແລະ ການເກັບເຄື່ອງປ່າຂອງດົງ. ການເກັບກູ້ທີ່ບໍ່ມີການຄວບຄຸມໄດ້ນຳໄປສູ່ການສູນເສຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມ ຢ່າງຮຸນແຮງ. ໃນປີ 2002, ມລຸບ ໄບຕ່ອງ ໄດ້ສ້າງຕັ້ງ ໂຄງການທ່ອງທ່ຽວເຊີງອະນຸລັກທຳມະຊາດ ໂດຍອີງໃສ່ຊຸມຊົນເປັນເຈົ້າການຂຶ້ນ. (ລວມມີການ ພັກເຊົາຮ່ວມກັບຊາວບ້ານ, ການຕັ້ງແຄັມ, ທ່ຽວນ້ຳຕົກ ແລະ ເບິ່ງສັດປ່າ) ໂດຍມີທັດສະນະ ເພື່ອສ້າງໃຫ້ຊຸມຊົນຕ່າງໆມີຄວາມສາມາດໃນການປັບປຸງຊີວິດການເປັນຢູ່ ແລະ ມີຄວາມຍືນຍົງ ໃນຂະນະທີ່ມີການຄຸ້ມຄອງ ແລະ ອະນຸລັກສັດປ່າທີ່ດີກວ່າເກົ່າ.

ໂຄງການດັ່ງກ່າວ ໄດ້ສະໜອງການຝຶກອົບຮົມ, ໄດ້ຊ່ວຍປັບປຸງສະຖາບັນຄຸ້ມຄອງທ້ອງຖິ່ນ, ແລະ ສ້າງໂຄງລ່າງພື້ນຖານ. ປັດຈຸບັນ ໂຄງ ການໄດ້ສ້າງລາຍຮັບ ໃຫ້ແກ່ສະມາຊິກຊຸມຊົນທີ່ມີການເຊື່ອມໂຍງໂດຍກົງກັບປ່າໄມ້. ປັດຈຸບັນ ໂຄງການດັ່ງກ່າວ ສ້າງຜົນປະໂຫຍດໃຫ້ປະມານ 900 ຄົວເຮືອນ ໃນເກົ້າໝູ່ບ້ານ. ການລ່າສັດປ່າ ໄດ້ຫຼຸດລົງຢ່າງເຫັນໄດ້ຈະແຈ້ງ (ແລະ ສ່ວນໃຫຍ່ແມ່ນໄດ້ຢຸດຕິແລ້ວ) , ໃນຂະ ນະທີ່ການຕັດໄມ້ແບບຜິດກົດໝາຍກໍ່ຫຼຸດລົງເຊັ່ນກັນ. ໂດຍສະເພາະ, ປັດຈຸບັນ ໂຄງການດັ່ງກ່າວແມ່ນທ້ອງຖິ່ນເປັນເຈົ້າຂອງທັງໝົດ, ໂດຍທີ່ ມລຸບ ໄບຕ່ອງ ໄດ້ຄ່ອຍໆຖອນການສະໜັບສະໜູນ ໃນຫຼາຍປີທີ່ຜ່ານມາ.



© Tung Pham/TRAFFIC

h. ການຂາດຄວາມຮູ້ຂອງສະມາຊິກຊຸມຊົນກ່ຽວກັບເນື້ອໃນການອະນຸລັກ ແລະ ໄພຂົ່ມຂູ່ຕໍ່ຊີວະນາໆພັນໃນວົງກວ້າງອາດຈະປະກອບສ່ວນໃຫ້ແກ່ການລ່າສັດເພື່ອການຄ້າສັດປ່າທີ່ຜິດກົດໝາຍຂອງທ້ອງຖິ່ນໄດ້; ການເພີ່ມຄວາມຮູ້ຂອງເຂົາເຈົ້າອາດຈະຊ່ວຍປ່ຽນແປງພຶດຕິກຳການລ່າສັດຂອງເຂົາເຈົ້າໄດ້.

i. ການຈູງໃຈຜູ້ຄົນ ເຂົ້າໃນການຕ້ານການຄ້າສັດປ່າທີ່ຜິດກົດໝາຍສາມາດເຮັດໃນຮູບການທາງການເງິນ ແລະ ບໍ່ແມ່ນທາງການເງິນ, ແບບວັດຖຸ ແລະ ບໍ່ແມ່ນວັດຖຸ. ການຈູງໃຈດ້ວຍວັດຖຸສາມາດກາຍເປັນສິ່ງສຳຄັນໃນການຈູງໃຈໃຫ້ປະຕິບັດວຽກອະນຸລັກໄດ້, ໃນກອງປະຊຸມ ຄວາມຈຳເປັນໃນການດຳລົງຊີວິດຈະເປັນສິ່ງມາກ່ອນ ສຳລັບ ຜູ້ຄົນ, ໂດຍສະເພາະ ຜູ້ທີ່ມີການດຳລົງຊີວິດທີ່ທຸກຈົນ. ຜະລິດຕະພັນສັດປ່າມີມູນຄ່າສູງ ແລະ ເປັນການຈູງໃຈທາງການເງິນອັນສຳຄັນຂອງການລ່າສັດ ເພື່ອການຄ້າສັດປ່າທີ່ຜິດກົດໝາຍທີ່ຈຳເປັນຕ້ອງໄດ້ຮັບຮູ້ ແລະ ໄດ້ຮັບການແກ້ໄຂ.

j. ຜົນປະໂຫຍດ ທີ່ໄດ້ຮັບຂອງສະມາຊິກຊຸມຊົນທີ່ຈຳເປັນຕ້ອງຂຶ້ນໂດຍກົງກັບການອະນຸລັກທີ່ມີປະສິດທິຜົນ ເພື່ອເຮັດໃຫ້ຜົນປະໂຫຍດເຫຼົ່ານີ້ເພີ່ມຄວາມໜ້າເຊື່ອຖືໃຫ້ແກ່ການອະນຸລັກ. ຜົນປະໂຫຍດຕ່າງໆ ສາມາດສະໜອງການຈູງໃຈໃຫ້ແກ່ການອະນຸລັກ (ເຊັ່ນ: ການທ່ອງທ່ຽວແບບທຳມະຊາດ, ການຈ່າຍເງິນໃຫ້ແກ່ລະບົບບໍລິການຂອງລະບົບນິເວດວິທະຍາ (PES), ການນຳໃຊ້ສັດປ່າພາຍໃຕ້ເງື່ອນໄຂການຄຸ້ມຄອງທີ່ສົມເຫດສົມ

ຜົນ) ຫຼື ສາມາດສະໜອງແຫຼ່ງລາຍຮັບ/ໂປຣຕີນ ອັນໃໝ່ທີ່ຫຼຸດຜ່ອນການຈູງໃຈໃນການລ່າສັດປ່າໄດ້.

k. ທີ່ຢູ່ອາໃສຢ່າງຫຼວງຫຼາຍ ໃນປ່າດົງອັນຕຶບໜາຂອງພາກພື້ນນີ້ ຈຳກັດຄວາມສາມາດໃນການນຳໃຊ້ການທ່ອງທ່ຽວ ເບິ່ງສັດປ່າໃຫ້ເປັນວິທີການອັນໜຶ່ງໃນການສ້າງສິ່ງຈູງໃຈທາງກົງໃຫ້ແກ່ການອະນຸລັກສາຍພັນສັດປ່າ.

l. ຂາດການຮັບຮູ້ຕາມກົດໝາຍຂອງການຄອບຄອງຕາມຮີດຄອງປະເພນີ ແລະ ສິດໃນການຄອບຄອງ ຫຼື ການປ່ຽນແທນສິ່ງເຫຼົ່ານີ້ ຈາກການຈັດສັນທີ່ດິນຂອງລັດ, ໝາຍເຖິງ ການພັດທະນາຈັນຍາທຳ ຂອງການຄອບຄອງ ແລະ ການຄຸ້ມຄອງຊັບພະຍາກອນແບບຍືນຍົງແມ່ນຍັງຂາດເຂີນຢູ່. ການຮັບຮູ້ສິດໃນການຄອບຄອງຂອງຊຸມຊົນ, ໂດຍສະເພາະ ການຄອບຄອງທີ່ດິນ, ອາດຈະເປັນຮາກຖານອັນສຳຄັນໃຫ້ແກ່ການປະຕິບັດວຽກການອະນຸລັກ, ເຖິງແມ່ນວ່າ ການຄອບຄອງທີ່ດິນຢ່າງດຽວຈະບໍ່ພຽງພໍ ສຳລັບ ການຈູງໃຈການປະຕິບັດວຽກອະນຸລັກກໍ່ຕາມ.

m. ການກຳນົດທາງເລືອກ ການດຳລົງຊີວິດທີ່ສ້າງລາຍຮັບພຽງພໍໃນການແຂ່ງຂັນກັບລາຍຮັບຜິດກົດໝາຍ ທີ່ໄດ້ຈາກການຄ້າສັດປ່າທີ່ຜິດກົດໝາຍອາດຈະເປັນສິ່ງທ້າທາຍ, ໂດຍສະເພາະ ຢູ່ບ່ອນທີ່ຜູ້ເຂົ້າຮ່ວມບໍ່ມີທັກສະ/ຄວາມສາມາດ ໃນການສະແຫວງຫາທາງເລືອກອື່ນຂອງການດຳລົງຊີວິດໄດ້.

n. ການນຳໃຊ້ ແລະ ການຄ້າພັນສັດປ່າມີຄວາມສຳຄັນຕໍ່ການດຳລົງຊີວິດຢູ່ພາກພື້ນນີ້, ແລະ ຢູ່ບ່ອນທີ່ມີການຄຸ້ມຄອງທີ່ດີ ແລະ ກົດ ໝາຍສາມາດສະໜອງສິ່ງຈູງໃຈ ໃຫ້ແກ່ການອະນຸລັກສະຖານທີ່ ແລະ ສາຍພັນຕ່າງໆໄດ້, ລວມທັງ ສາຍພັນຕ່າງໆ ທີ່ນອກເໜືອຈາກສາຍພັນທີ່ຖືກຄ້າຂາຍ. ການສ້າງການເຊື່ອມໂຍງ ລະຫວ່າງ ຊຸມຊົນຕ່າງໆ ກັບ ຕະຫຼາດ, ການສ້າງຄວາມສາດໃນການເພີ່ມມູນຄ່າ, ການຊຸກຍູ້ດ້ານການຄ້າໃຫ້ເຂົ້າເຖິງເທັກໂນໂລຊີ ແລະ ແນວຄວາມຄິດຕ່າງໆ ເພື່ອເພີ່ມຜົນປະໂຫຍດໃຫ້ແກ່ທ້ອງຖິ່ນ ຈາກການນຳໃຊ້ ແລະການຄ້າສັດປ່າແມ່ນສິ່ງທ້າທາຍອັນໃຫຍ່ຫຼວງ.

o. ເຖິງຢ່າງໃດກໍ່ຕາມ, ຮູບແບບການນຳໃຊ້ສັດປ່າ ຫຼື ການດຳລົງຊີວິດຮູບແບບໃໝ່ ທີ່ໄດ້ຮັບການສະໜັບສະໜູນຕ້ອງມີຄວາມເໝາະສົມກັບດ້ານວັດທະນະທຳ, ເລືອກໂດຍຊຸມຊົນ, ສະໜອງຜົນປະໂຫຍດດ້ານອະນຸລັກຢ່າງກວ້າງຂວາງ ໃນບ່ອນທີ່ມີຄວາມເປັນໄດ້, ແລະສະໜັບສະໜູນການປະຕິບັດ ແລະ ການຄຸ້ມຄອງແບບຮີດຄອງດັ້ງເດີມ. ການແຊກແຊງຕ້ອງຊຸກຍູ້ເຂົ້າໃນຄວາມເຂົ້າໃຈອັນເລິກເຊິ່ງຂອງທ້ອງຖິ່ນ - ໃນຂະນະທີ່ມີຫຼາຍກໍລະນີສຶກສາ ໃຫ້ແລກປ່ຽນ ແລະ ສຶກສານັ້ນ, ຍັງບໍ່ທັນມີຮູບແບບໃດທີ່ "ສາມາດປະຕິບັດຄືນໄດ້" ທີ່ຈະເຮັດໃຫ້ເກີດຄວາມຫຼາກຫຼາຍຂອງສະຖານະການໃດໜຶ່ງກໍ່ຕາມ.

p. ການແຊກແຊງມີຄວາມຈຳເປັນຕ້ອງປະກອບເຂົ້າໃນການພິຈາລະນາການແບ່ງປັນຜົນປະໂຫຍດແບບໂປ່ງໃສ ແລະ ຍຸດຕິທຳຢູ່ພາຍໃນຊຸມຊົນ, ຄວນລວມເອົາແມ່ຍິງເຂົ້າຮ່ວມຢ່າງເຕັມສ່ວນ; ມີກົນໄກການຄຸ້ມຄອງທີ່ດີ (ທີ່ສາມາດລວມເອົາດ້ານຄວາມເຊື່ອມເສຍທາງສັງຄົມ); ແລະ ມີຄວາມຮັບຜິດຊອບ ແລະ ມີກົນໄກການຄຸ້ມຄອງທາງການເງິນທີ່ຈະແຈ້ງ. ຊ່ອງທາງດ້ານຜົນປະໂຫຍດ ສຳລັບ ແມ່ຍິງຫຼາຍກວ່າ ສຳລັບ ຜູ້ຊາຍມີປະສິດທິຜົນໃນການສະໜັບສະໜູນຜົນສຳເລັດໄລຍະຍາວຂອງການແຊກແຊງຢູ່ໃນຫຼາຍກໍລະນີ.

q. ນະວັດຕະກຳ ດ້ານການດຳລົງຊີວິດຂອງທ້ອງຖິ່ນ (ປ່າໄມ້ຊຸມຊົນ, ການທ່ອງທ່ຽວ, ວິສາຫະກິດ ກ່ຽວກັບ ສັດປ່າ) ອາດຈະຖືກຈຳກັດຍ້ອນມັກຈະປະສົບການບັນຫາດ້ານການຕັດສິນໃຈ ແລະ ການຮ່ວມມືໃນຫຼາຍລະດັບຂອງລັດຖະບານ.

r. ການປະຕິບັດທີ່ດີເຊັ່ນ: ມາດຕະຖານການຊື້-ຂາຍສັດປ່າ ແລະ ການຢັ້ງຢືນຈາກພາຍນອກທີ່ເປັນຝ່າຍທີສາມ ແລະ ກົນໄກການປະຕິບັດສາມາດຊ່ວຍຜັກດັນຄວາມຍືນຍົງ ແລະ ສົ່ງເສີມການປະຕິບັດຕາມການນຳໃຊ້ສັດປ່າໄດ້.

s. ໃນການປະເມີນວ່າ ການແຊກແຊງດ້ານການດຳລົງຊີວິດ ຈະສ້າງຜົນປະໂຫຍດໃຫ້ແກ່ການອະນຸລັກໄດ້ ຫຼື ບໍ່ນັ້ນ, ໃນການວາງແຜນປະເມີນເຫຼົ່ານັ້ນ ການແຊກແຊງ ຕ້ອງປະເມີນບໍ່ສະເພາະແຕ່ຄວາມເປັນໄປໄດ້ຂອງການຫຼຸດລົງ ໃນດ້ານການເກັບກູ້ຜົນຜະລິດແບບຜິດກົດໝາຍເທົ່ານັ້ນ, ແຕ່ຍັງຕ້ອງໄດ້ປະເມີນ ທຸກການນຳໃຊ້ທີ່ດິນ ແລະ ຜົນກະທົບທີ່ມີຕໍ່ນິເວດວິທະຍາ ຂອງ ວິທີການອັນໃໝ່ທີ່ໄດ້ຮັບການແນະນຳອີກດ້ວຍ. ຍົກຕົວຢ່າງ, ໃນບ່ອນທີ່ມີການສະເໜີ ໃຫ້ມີການຂະຫຍາຍການປູກຝັງນັ້ນ ຜົນກະທົບຂອງການຕັດໄມ້ແມ່ນມີຄວາມຈຳເປັນຕ້ອງໄດ້ຮັບການປະເມີນ.

## 4. ການແກ້ໄຂບັນຫາຕ່າງໆ ບໍ່ສາມາດນຳໃຊ້ກັບຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນທີ່ມາຈາກພາຍນອກໄດ້

a. ການແຊກແຊງ ຕ້ານການຄ້າສັດປ່າທີ່ຜິດກົດໝາຍ ມີຄວາມເປັນໄປໄດ້ທີ່ຈະມີຄວາມຍືນຍົງຍິ່ງກວ່າເກົ່າ ເມື່ອໄດ້ມີການວາງແຜນ ແລະ ນຳພາ ໂດຍຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນເອງ, ຫຼື ໂດຍການເຂົ້າຮ່ວມອັນສຳຄັນຂອງຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນເຂົ້າໃນການວາງແຜນ ແລະ ການຕັດສິນໃຈ.

b. ການສ້າງຄວາມເຊື່ອໝັ້ນເປັນບາດກ້າວທຳອິດທີ່ມີຄວາມສຳຄັນ, ແລະ ອາດຈະໃຊ້ເວລາດົນ. ການສ້າງສາຍພົວພັນ ເປັນລາຍບຸກຄົນ (ຫຼາຍກວ່າສ້າງການປ່ຽນແປງເປັນໄລຍະໂດຍທີ່ປຶກສາຈາກພາຍນອກ) ແມ່ນສິ່ງສຳຄັນ.

c. ການແຊກແຊງ ຈະມີປະສິດທິຜົນຫຼາຍກວ່າເກົ່າ ເມື່ອເຂົາເຈົ້າຕອບສະໜອງໃຫ້ແກ່ການກຳນົດບູລິມະສິດ, ຄວາມຕ້ອງການ ແລະ ຄຸນຄ່າຕ່າງໆ ໃນຮູບການທີ່ມີຄວາມໝາຍດ້ວຍຕົວຂອງຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນເອງຫຼາຍກວ່າການກຳນົດຄຸນຄ່າ ຫຼື ແນວຄວາມຄິດຄວາມຕ້ອງການຂອງຊຸມຊົນຈາກພາຍນອກ. ສິ່ງນີ້ ຈະຮຽກຮ້ອງເຖິງການເຮັດໃຫ້ຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນມີຄວາມສາມາດໃນການເຂົ້າຮ່ວມໃນກອງປະຊຸມທີ່ກ່ຽວຂ້ອງໃນຫຼາຍລະດັບ ແລະ ການອອກຄວາມຄິດເຫັນ ແລະ ນຳສະເໜີ ທັດສະນະ ແລະ ບູລິມະສິດ ຂອງຕົນ.



### ກໍລະນີສຶກສາທີ 3

### ການເຂົ້າຮ່ວມຂອງຊຸມຊົນ ແລະ ການບັງຄັບໃຊ້ທີ່ດີກວ່າເກົ່າ: ການພົວພັນເຊິ່ງກັນ ແລະ ກັນ ຂອງທັງສອງດ້ານ?

ຊາວະລິດ ວິດທະຍານົນ (ມູນນິທິສືບນາຄະສະຖຽນ, ປະເທດໄທ) ໄດ້ສົນທະນາ ກ່ຽວກັບ ໂຄງການປ່າໄມ້ຊຸມຊົນ ຢູ່ເຂດປ່າໄມ້ສະຫຼັບສັບຊ້ອນທາງພາກຕະເວັນຕົກຂອງປະເທດ, ເຂດມໍລະດົກໂລກທາງທຳມະຊາດ ທີ່ເປັນບ່ອນອາໃສຂອງຜູ້ຄົນຫຼາຍກວ່າ 2,000 ຄົນ ທີ່ມີການລ່າສັດເປັນໄລຍະໄລຍະ ເພື່ອການດຳລົງຊີວິດພໍກຸ້ມກິນ ແລະ ການຄ້າພາຍໃນ/ຕ່າງປະເທດ. ໂດຍສະພາະພື້ນຖານການເຮັດວຽກກັບຊຸມຊົນແມ່ຈັນ ຂອງ ສູນພິທັກສັດປ່າອຳພາງ (ປະມານ 40 ໝູ່ບ້ານ, ເຊິ່ງສ່ວນໃຫຍ່ແມ່ນຊົນເຜົ່າກະຣ່ຽງ). ວຽກຂອງໂຄງການແມ່ນເນັ້ນໃສ່ການສະໜັບສະໜູນການຄຸ້ມຄອງປ່າໄມ້ຊຸມຊົນ ແລະ ຄຸ້ມຄອງແມ່ນ້ຳຮ່ວມກັນ, ສະໜັບສະໜູນລາຍຮັບ ທີ່ບໍ່ເອື່ອຍອີງໃສ່ການເກັບກູ້ທີ່ແບບບໍ່ຍືນຍົງ ແລະ ການເຮັດໃຫ້ການບັງຄັບໃຊ້ມີປະສິດທິຜົນຫຼາຍກວ່າເກົ່າ. ທາງເລືອກ ໃນການດຳລົງຊີວິດ ລວມທັງ ການເກັບກູ້ເຄື່ອງປ່າຂອງດົງແບບຍືນຍົງ (ເຊັ່ນ: ການຍ້ອມສີແຜ່ນແພ) ແລະ ການພິ່ມມູນຄ່າເພື່ອຕະຫຼາດ , ແລະ ການທ່ອງທ່ຽວແບບອະນຸລັກ.

ຄວາມພະຍາຍາມ ບັງຄັບໃຊ້ໄດ້ເນັ້ນໃສ່ການສ້າງຄວາມສາມາດໃຫ້ແກ່ເຈົ້າໜ້າທີ່ລາດຕະເວນທ້ອງຖິ່ນ. ວຽກຂອງມູນນິທິ ໄດ້ນຳໄປສູ່ການຟື້ນຟູຄືນພື້ນທີ່ປ່າໄມ້ ແລະ ການຄຸ້ມຄອງແມ່ນ້ຳທີ່ດີກວ່າເກົ່າ, ລວມທັງ ການພິທັກສັດນ້ຳ. ການຄົ້ນຄວ້າຂອງເຂົາເຈົ້າໄດ້ຊີ້ໃຫ້ເຫັນວ່າການລ່າສັດໄດ້ຫຼຸດລົງ, ເຊິ່ງ ໄດ້ເຮັດໃຫ້ຈຳນວນເສືອຊະນິດຕ່າງໆ ແລະ ສັດທີ່ຖືກລ່າມາເພື່ອເປັນອາຫານໄດ້ຮັບການຟື້ນຟູຄືນໃໝ່.

ບົດລາຍງານກອງປະຊຸມສະບັບເຕັມສາມາດເບິ່ງໄດ້ທີ່:
https://www.iucn.org/sites/dev/files/be_hanoi_communique.pdf

ບົດສະເໜີກອງປະຊຸມສາມາດເບິ່ງໄດ້ທີ່:
https://drive.google.com/drive/folders/0B2tS2L57A9YINVJWTGFEWkxLbXM

IUCN

CEESP

SSC Species Survival Commission

SULi Sustainable Use and Livelihoods Specialist Group

iied International Institute for Environment and Development

TRAFFIC the wildlife trade monitoring network

The ICCA Consortium

ພວກເຮົາຂໍສະແດງຄວາມຮູ້ບຸນຄຸນຢ່າງຊາບຊຶ້ງຕໍ່ການໃຫ້ການສະໜັບສະໜູນຂອງ:

USAID FROM THE AMERICAN PEOPLE

german cooperation DEUTSCHE ZUSAMMENARBEIT

Implemented by: giz Deutsche Gesellschaft für Internationale Zusammenarbeit (GIZ) GmbH